PK555.

2.2.2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*******❁❁❁❁❁❁❁❁❁❁❁❁********

ຄະນະບໍລິຫານງານ

ສູນກາງສະຫະພັນກຳມະບານລາວ

ເລກທີ 1373 /ສກລ

ນະຄອນຫຼວງວຽງຈັນ, ວັນທີ 16 NOV 2011

# ເນື້ອໃນຂໍ້ແຂ່ງຂັນ

# 2 ດີ 5 ເປັນເຈົ້າ ຂອງສະຫະພັນກຳມະບານລາວ

********************************************************

- ອີງຕາມລັດຖະດຳລັດ ຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍການ ເປີດຂະບວນການແຂ່ງຂັນ - ຍ້ອງຍໍ ໃນໄລຍະໃໝ່ ສະບັບເລກທີ 011/ປປທ ລົງວັນທີ 20/1/2010 ແລະ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີວຽກງານ ແຂ່ງຂັນ - ຍ້ອງຍໍ ໄລຍະໃໝ່ ສະບັບເລກທີ 121/ນຍ. ລົງວັນທີ 24/2 / 2010.

- ອີງຕາມກົດໝາຍ ວ່າດ້ວຍກຳມະບານລາວ ມາດຕາ 50 - 51 ວ່າດ້ວຍນະໂຍບາຍ ຕໍ່ຜູ້ມີຜົນງານ.

- ກອງປະຊຸມຄົບຄະນະບໍລິຫານງານ ສູນກາງສະຫະພັນກຳມະບານລາວ ຄັ້ງທີ 2 ສະໄໝທີ VI ຈຶ່ງໄດ້ປັບປຸງຂໍ້ກຳນົດເນື້ອໃນຂໍ້ແຂ່ງຂັນ 2 ດີ 5 ເປັນເຈົ້າ ທົ່ວສະຫະພັນກຳມະບານລາວ ມີດັ່ງນີ້.

## I. ຈຸດປະສົງ, ຄາດໝາຍຂອງຂະບວນການແຂ່ງຂັນ:

### ກ. ຈຸດປະສົງ:

- ເພື່ອປຸກລະດົມ ຊຸກຍູ້ພະນັກງານ, ສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານ ແຂ່ງຂັນກັນຈັດຕັ້ງປະຕິບັດ ມະຕິກອງ ປະຊຸມໃຫຍ່ ຄັ້ງທີ່ IX ຂອງພັກ ແນ່ໃສ່ເຮັດສຳເລັດ,ເນື້ອໃນ ບຸກທະລຸທັງ 4 ດ້ານ, ແຜນພັດທະນາ ເສດຖະກິດ - ສັງຄົມ 5 ປີ ແຫ່ງລັດ ຄັ້ງທີ VII ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງສະຫະພັນກຳມະບານລາວ ໃຫ້ປະກົດຜົນເປັນຈິງ.

- ເພື່ອເປັນບ່ອນອີງໃຫ້ກຳມະບານແຕ່ລະຂັ້ນ ມີຄວາມເປັນເອກະພາບ ໃນການສ້າງຂະບວນການແຂ່ງຂັນ ແລະ ສົ່ງເສີມຫົວຄິດປະດິດສ້າງ ຄວາມຮູ້ຄວາມ ສາມາດທີ່ບົ່ມຊ້ອນຢູ່ໃນຖັນແຖວພະນັກງານ,ສະມາຊິກກຳມະບານ,ກຳມະກອນ, ຜູ້ອອກແຮງງານ ເຂົ້າສູ່ຊີວິດຕົວຈິງໃນການຜະລິດ, ການບໍລິການ, ເພື່ອເປັນການປະກອບສ່ວນ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

- ເພື່ອເຮັດໃຫ້ຄະນະບໍລິຫານງານ ສະຫະພັນກຳມະບານແຕ່ລະຂັ້ນ, ສະມາຊິກກຳມະບານ, ກຳມະກອນ, ຜູ້ອອກແຮງງານ ເຂົ້າໃຈບັນດາເນື້ອໃນ ຂໍ້ແຂ່ງຂັນ 2 ດີ 5 ເປັນເຈົ້າ ຢ່າງເລິກເຊິ່ງ ແລະ ວິທີການຈັດຕັ້ງປະຕິບັດ ໃຫ້ປະກົດ ຜົນເປັນຈິງ.

**ຂ . <u>ຄາດໝາຍ</u> :**

- ຜ່ານການປະຕິບັດເນື້ອໃນຂໍ້ແຂ່ງຂັນ 2 ດີ 5 ເປັນເຈົ້າ ສ້າງໄດ້ພະນັກງານ, ສະມາຊິກກຳມະບານ,ກຳມະກອນ,ຜູ້ອອກແຮງງານມີຄວາມຮູ້,ຄວາມສາມາດ ມີຫົວຄິດປະດິດສ້າງເຂົ້າໃນການຜະລິດ ແລະ ການບໍລິການ.

- ເຮັດໃຫ້ພະນັກງານ,ສະມາຊິກກຳມະບານ,ກຳມະກອນ ມີຄວາມຕື່ນຕົວສະໝັກໃຈເຂົ້າຮ່ວມການຈັດຕັ້ງ ຂະບວນການແຂ່ງຂັນ, ນຳໃຊ້ຄວາມຮູ້ຄວາມ ສາມາດ,ເຕັກນິກວິທະຍາສາດ ເຂົ້າໃນຂະບວນການຜະລິດ ເປັນສິນຄ້າ ທີ່ ມີຄຸນນະພາບສູງ.

- ຜ່ານຂະບວນການແຂ່ງຂັນແຕ່ລະໄລຍະ ເພື່ອຊອກເຫັນບຸກຄົນ,ກົມກອງ ແລະ ລວມໝູ່ ທີ່ດີເດັ່ນ ຢູ່ໃນຂະບວນການຕົວຈິງເພື່ອຍ້ອງຍໍສັນລະເສີນທັນເວລາ.

## II. <u>ເປົ້າໝາຍເຊື່ອມຊຶມ ແລະ ເຂົ້າຮ່ວມຂະບວນການຈັດຕັ້ງປະຕິບັດ ຂໍ້ແຂ່ງຂັນ 2 ດີ 5 ເປັນເຈົ້າ</u>.

- ຄະນະນຳ,ພະນັກງານ,ສະມາຊິກກຳມະບານ,ກຳມະກອນ,ຜູ້ອອກແຮງງານ.

# III <u>ເນື້ອໃນຂໍ້ແຂ່ງຂັນ 2 ດີ 5 ເປັນເຈົ້າ.</u>

### ກ. <u>ເນື້ອໃນຂໍ້ແຂ່ງຂັນ 2 ດີ .</u>

- ດີທີ່ 1 : ພະນັກງານ , ສະມະຊິກກຳມະບານ ແລະ ກຳມະກອນດີ.
- ດີທີ່ 2 : ຂະບວນການກຳມະບານດີ.

❖ ເນື້ອໃນລະອຽດຂອງແຕ່ລະຂໍ້ມີດັ່ງນີ້:

1. ດີທີ 1 : <u>ພະນັກງານ, ສະມາຊິກກຳມະບານ ແລະ ກຳມະກອນດີ.</u>

- ມີຄຸນທາດການເມືອງດີ.
- ແບບແຜນວິທີເຮັດວຽກ,ການດຳລົງຊີວິດດີ.
- ຕັ້ງໜ້າຈັດຕັ້ງປະຕິບັດ, ເຮັດສຳເລັດໜ້າທີ່ການຈັດຕັ້ງມອບໝາຍໃຫ້ເປັນຢ່າງດີ.
- ພັດທະນາຕົນເອງດີ.
- ດຳເນີນຊີວິດການເມືອງ, ຈ່າຍເງິນບຳລຸງ, ສົ່ງເງິນບຳລຸງ ໃຫ້ຂັ້ນເທິງເປັນປົກກະຕິດີ.

2. ດີທີ 2 : <u>ຂະບວນການກຳມະບານດີ.</u>

- ເພີ່ມທະວີຄວາມຮັບຮູ້ຕໍ່ວຽກງານກຳມະບານດີ.
- ກໍ່ສ້າງ, ປັບປຸງ ແລະ ຂະຫຍາຍການຈັດຕັ້ງກຳມະບານດີ.
- ຈັດຕັ້ງການເຄື່ອນໄຫວວຽກງານກຳມະບານດີ.

ຂ. <u>ເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ.</u>

1. ເປັນເຈົ້າ ໂຄສະນາສຶກສາອົບຮົມການເມືອງແນວຄິດ.
2. ເປັນເຈົ້າ ໃນການພັດທະນາວຽກງານກຳມະບານລາວ.
3. ເປັນເຈົ້າ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພະນັກງານ, ສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານ.
4. ເປັນເຈົ້າ ເຂົ້າຮ່ວມ ໃນການ ຕິດຕາມ, ກວດກາ, ຄຸ້ມຄອງເສດຖະກິດ, ວັດທະນາທຳ - ສັງຄົມ.
5. ເປັນເຈົ້າ ຈັດຕັ້ງປະຕິບັດ ແນວທາງການຕ່າງປະເທດຂອງພັກ.

❖ ເນື້ອໃນລະອຽດຂອງແຕ່ລະຂໍ້ມີດັ່ງນີ້:

## 1. <u>ເປັນເຈົ້າໂຄສະນາສຶກສາອົບຮົມການເມືອງແນວຄິດ:</u>

- ເຊື່ອມຊຶມມູນເຊື້ອຂອງພັກ, ຂອງກຳມະບານລາວ,ມະຕິ,ແນວທາງນະໂຍບາຍຂອງພັກ, ແຜນພັດທະນາ ເສດຖະກິດ - ສັງຄົມຂອງລັດ.

- ສະຫະພັນກຳມະບານ ແຕ່ລະຂັ້ນ ໃຫ້ໄດ້ຈັດຕັ້ງຮ່ຳຮຽນ ກົດໝາຍ ວ່າດ້ວຍ

ກຳມະບານລາວ, ເນື້ອໃນຂໍ້ແຂ່ງຂັນ 2 ດີ 5 ເປັນເຈົ້າ ໃຫ້ແກ່ພະນັກງານ, ສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານລາວ.

- ດຳເນີນຊີວິດປະຈຳເດືອນ ຂອງໜ່ວຍກຳມະບານ ແລະ ຕີລາຄາແບ່ງປະເພດຂອງສະມາຊິກກຳມະບານໃນທຸກໆເດືອນ( ໃຫ້ໜັກແໜ້ນ,ເຂັ້ມແຂງ,ປອດໃສ ), ເປັນການປະກອບສ່ວນກໍ່ສ້າງປັບປຸງພັກໃຫ້ເຂັ້ມແຂງ ຮູ້ນຳພາຮອບດ້ານ .

## 2. ເປັນເຈົ້າໃນການພັດທະນາວຽກງານກຳມະບານລາວ.

- ສະຫະພັນກຳມະບານແຕ່ລະຂັ້ນ ຕ້ອງເປັນເຈົ້າການພັດທະນາວຽກງານ ກຳມະບານລາວ, ປັບປຸງໜ້າທີ່, ສິດຂອບເຂດ, ວິທີເຮັດວຽກ ແລະ ຂະຫຍາຍການຈັດຕັ້ງ ຂອງຕົນ ຕາມຄາດໝາຍທີ່ກອງປະຊຸມໃຫຍ່ ຄັ້ງທີ່ VI ຂອງສະຫະພັນກຳມະບານລາວວາງອອກ.

- ຜ່ານຂະບວນການແຂ່ງຂັນໃນຄັ້ງນີ້ ສ້າງໃຫ້ໄດ້ພະນັກງານ, ສະມາຊິກກຳມະບານ, ກຳມະກອນດີເດັ່ນຂອງພັກ - ລັດ.

- ຄະນະບໍລິຫານງານ ກຳມະບານທຸກຂັ້ນ ຕ້ອງສ້າງພະນັກງານສືບທອດຕົນເອງໃຫ້ໄດ້ 1-2 ຄົນຂຶ້ນເມືອ ແລະ ສ້າງພະນັກງານຫຼັກແຫຼ່ງໃນຂັ້ນຕ່າງໆ ເພື່ອຮັບໃຊ້ໜ້າທີ່ການເມືອງໃນສະເພາະໜ້າ ແລະ ຍາວນານ.

- ຊຸກຍູ້ໃຫ້ບັນດາຫົວໜ່ວຍແຮງງານ ຮາກຖານ ການຜະລິດ,ໂຮງຈັກ,ໂຮງງານເອົາໃຈໃສ່ຍົກລະດັບວິຊາຊີບ, ສີມືແຮງງານ ແລະ ຄວາມຮູ້ຄວາມສາມາດເຕັກໂນໂລຢີໃຫ້ຜູ້ອອກແຮງງານກາຍເປັນຜູ້ຊຳນານງານ.

## 3. ເປັນເຈົ້າປົກປ້ອງສິດ,ຜົນປະໂຫຍດ,ອັນຊອບທຳຂອງພະນັກງານ,ສະມາຊິກກຳມະບານ,ກຳມະກອນ ແລະ ຜູ້ອອກແຮງງານ.

- ພະນັກງານ, ສະມາຊິກກຳມະບານ, ກຳມະກອນ, ຜູ້ອອກແຮງງານລາວເປັນເຈົ້າການເສີມຂະຫຍາຍສິດເປັນເຈົ້າ,ເຂົ້າຮ່ວມປະກອບຄຳຄິດ ຄຳເຫັນ ຕໍ່ແນວທາງນະໂຍບາຍຂອງພັກ,ລະບຽບກົດໝາຍແລະແຜນພັດທະນາເສດຖະກິດ-ສັງຄົມຂອງລັດ.

- ພະນັກງານ, ສະມາຊິກກຳມະບານ, ກຳມະກອນ, ຜູ້ອອກແຮງງານລາວຕ້ອງໄດ້ຮັບຜົນປະໂຫຍດ ທາງດ້ານເງິນຄ່າແຮງງານ, ເງິນເດືອນ, ນະໂຍບາຍອື່ນໆ.

ມີຄວາມປອດໄພ, ສຸຂະອານາໄມ ທາງດ້ານການອອກແຮງງານ ແລະ ຖືກຕ້ອງຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້.

- ສະຫະພັນກຳມະບານ ແຕ່ລະຂັ້ນຕ້ອງເປັນເຈົ້າການກວດກາ, ກວດການ, ການເຊັນຂໍ້ຜູກພັນສັນຍາ ລະຫວ່າງຜູ້ໃຊ້ແຮງງານ ກັບ ຜູ້ອອກແຮງງານ, ຕາງໜ້າໃຫ້ກຳມະກອນ, ຜູ້ອອກແຮງງານໃນການ ສ້າງ ແລະ ເຊັນສັນຍາແຮງງານລວມໝູ່, ບຸກຄົນກັບຜູ້ໃຊ້ແຮງງານ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດທັງສອງຝ່າຍ.

- ຊຸກຍູ້ບັນດາຫົວໜ່ວຍແຮງງານຕ່າງໆ ເຂົ້າປະກັນສັງຄົມ (ອປສ) ສ້າງ ແລະ ປັບປຸງກອງທຶນຊ່ວຍເຫລືອຊຶ່ງກັນ ແລະ ກັນ, ກອງທຶນທານຸເຄາະ ໃຫ້ກຳມະກອນ, ສະມາຊິກກຳມະບານ ແລະ ຜູ້ອອກແຮງງານ .

- ກຳມະບານແຕ່ລະຂັ້ນ ສ້າງເງື່ອນໄຂ ໃຫ້ສະມາຊິກກຳມະບານ, ກຳມະກອນໄດ້ຮັບນະໂຍບາຍ ຍົກລະດັບຄວາມຮູ້ຄວາມສາມາດ, ສີມືແຮງງານ, ໄປທ່ອງທ່ຽວ, ພັກຜ່ອນ, ຖອດຖອນບົດຮຽນ ໃນແຕ່ລະໄລຍະ ຕາມຄວາມເໝາະສົມ.

## 4. ເປັນເຈົ້າເຂົ້າຮ່ວມໃນການຕິດຕາມ, ກວດກາ, ຄຸ້ມຄອງເສດຖະກິດ, ວັດທະນາທຳ - ສັງຄົມ.

- ສະຫະພັນກຳມະບານແຕ່ລະຂັ້ນ ຕ້ອງເປັນເຈົ້າເຂົ້າຮ່ວມ, ຕິດຕາມ, ກວດກາໃນການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ - ສັງຄົມ ຂອງລັດ ແລະ ແຜນການທີ່ໄດ້ກຳນົດໄວ້ ຢູ່ແຕ່ລະຂົງເຂດວຽກງານ.

- ພະນັກງານ, ສະມາຊິກກຳມະບານ, ກຳມະກອນ, ຜູ້ອອກແຮງງານ ເປັນເຈົ້າການເຂົ້າຮ່ວມຕິດຕາມ, ກວດກາ ໃນຂະບວນການລົບລ້າງຄວາມທຸກຍາກ ໃຫ້ໄດ້ຕາມຄາດໝາຍ ສູ້ຊົນຂອງລັດຖະບານທີ່ກຳນົດໄວ້.

- ສະຫະພັນກຳມະບານ ແຕ່ລະຂັ້ນ ພະນັກງານ, ສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານແຕ່ລະຄົນ ຕ້ອງເຂົ້າຮ່ວມຕ້ານ ແລະ ສະກັດກັ້ນປະກົດການຍໍ້ທໍ້ໃນສັງຄົມ.

- ສະມາຊິກກຳມະບານແຕ່ລະຄົນຕ້ອງເປັນເຈົ້າການຈ່າຍເງິນບຳລຸງເປັນປົກກະຕິ, ຄະນະກຳມະບານແຕ່ລະຂັ້ນ ສົ່ງເງິນບຳລຸງໃຫ້ຂັ້ນເທິງຂອງຕົນ, ພ້ອມກັນນັ້ນໃຫ້ນຳໃຊ້ເງິນບຳລຸງຂັ້ນຂອງຕົນ ຖືກຕ້ອງຕາມຫຼັກການ.

## 5. ເປັນເຈົ້າຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງພັກ.

- ສະຫະພັນກຳມະບານແຕ່ລະຂັ້ນ ຕ້ອງເຊື່ອມຊຶມຕໍ່ແນວທາງການຕ່າງປະເທດຂອງພັກບົນຈິດໃຈເອກະລາດ, ສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະ ກັນ.
- ເສີມຂະຫຍາຍການພົວພັນຮ່ວມມື ກັບກຳມະບານປະເທດເພື່ອນມິດ ເຊັ່ນ: ສະມາພັນ ແຮງງານ ຫວຽດນາມ, ກຳມະບານທົ່ວປະເທດຈີນ; ພົວພັນຮ່ວມມືກັບບັນດາປະເທດ ແລະ ອົງການຈັດຕັ້ງສາກົນອື່ນໆໂດຍການເຫັນດີ ຈາກການຈັດຕັ້ງຂັ້ນເທິງ.

ເນື້ອໃນຂໍ້ແຂ່ງຂັນ 2 ດີ 5 ເປັນເຈົ້າສະບັບປັບປຸງນີ້ ໄດ້ຮັບຮອງຈາກກອງປະຊຸມຄົບຄະນະ ບໍລິຫານງານ ສະຫະພັນກຳມະບານລາວ ຄັ້ງທີ່ 2 ສະໄໝທີ່ VI ວັນທີ 10 -11 ຕຸລາ 2011.

ຕ.ຄະນະບໍລິຫານງານ
ສູນກາງສະຫະພັນກຳມະບານລາວ
ປະທານ

ຄຳຫລ້າ ລໍລອນສີ